ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ຫ້ອງການ

ເລກທີ: 1461 /ຫກ.3

ນະຄອນຫຼວງວຽງຈັນ, ວັນທີ: 22 ກໍລະກົດ2026

# ໜັງສືແຈ້ງເຊີນປະມູນ

1. ກະຊວງເຕັກໂນໂລຊີ ແລະ ການສື່ສານ ໂດຍຕາງໜ້າຫ້ອງການກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຂໍເຊີນ ບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທີ່ເໝາະສົມ ທີ່ດຳເນີນກິດຈະການດ້ານການກໍ່ສ້າງ ແລະ ສ້ອມແປງ ອາຄານ ເຂົ້າຮ່ວມປະມູນຈັດຊື້-ຈັດຈ້າງ ການສ້ອມແປງຫ້ອງເຮັດວຽກ ຂອງ ກະຊວງເຕັກໂນໂລຊີ ແລະ ການ ສື່ສານ, ໄລຍະເວລາການມອບຮັບໂຄງການ 60 ວັນ;
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດ ທີ່ມີຄຸນວຸດທິເໝາະສົມ ແລະ ມີອະນຸຍາດດຳເນີນທຸລະກິດຖືກຕ້ອງ ຕາມກົດໝາຍທີ່ກ່ຽວພັນກັບການກໍ່ສ້າງ ແລະ ສ້ອມແປງອາຄານ;
4. ບໍລິສັດໃດ ທີ່ຕ້ອງການຊື້ຊອງປະມູນຄົບຊຸດເປັນພາສາລາວ ໄດ້ທີ່ຫ້ອງການ ກະຊວງເຕັກໂນໂລຊີ ແລະ ການ ສື່ສານ, ຫ້ອງ 100 (ຊັ້ນ 1), ທີ່ກະຊວງເຕັກໂນໂລຊີ ແລະ ການສື່ສານ (ເຂດສີສະເກດ), ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ເບີໂທຕິດຕໍ່: 020 22223273, 020 54244626. ຈະເລີ່ມຂາຍຊອງປະມູນແຕ່ວັນທີ 23 ກໍລະກົດ 2026 ເຖິງວັນທີ 27 ສິງຫາ 2026 (ໃນໂມງລັດຖະການ), ໃນລາຄາ 2,000,000 ກີບ/ຊອງ (ສອງ ລ້ານກີບ), ຈຳນວນເງິນດັ່ງກ່າວນີ້ຈະບໍ່ໄດ້ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 10:30 ໂມງ ຂອງວັນທີ 27 ສິງຫາ 2026 ທີ່ຫ້ອງປະຊຸມຊັ້ນ 02, ກະຊວງເຕັກ ໂນໂລຊີ ແລະ ການສື່ສານ (ເຂດສີສະເກດ), ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ຊອງປະມູນໃດທີ່ສົ່ງຊ້າ ກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງ ຈະໄດ້ເປີດ ໃນເວລາ 10:30 ໂມງ ຂອງວັນທີ 27 ສິງຫາ 2026 ໂດຍສ່ອງໜ້າຄະນະການປະມູນ ແລະ ຕົວແທນຜູ້ປະມູນ;
6. ທຸກໆຊອງປະມູນຕ້ອງປະກອບການຄໍ້າປະກັນການປະມູນ ດ້ວຍເງິນສົດ ຫຼື ໜັງສືຄໍ້າປະກັນອອກໂດຍທະນາ ຄານ, ແຊັກ ບໍ່ໃຫ້ຫຼຸດ 2% (ສອງສ່ວນຮ້ອຍ) ຂອງມູນຄ່າທີ່ສະເໜີ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງບໍລິສັດ/ຫ້າງຮ້ານ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ຫົວໜ້າຫ້ອງການ

(ຫົວໜ້າຄະນະຈັດຊື້-ຈັດຈ້າງ)

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ຫ້ອງການ

ພອງປະເສີດ ແກ້ວສຸວັນ